COUNT US IN 2020

There's Power In Being Counted

ASIAN AMERICANS ADVANCING JUSTICE

COUNTUSIN2020.ORG

# ຄວາມຮູ້ເບື້ອງຕົ້ນເລື່ອງການສຳຫຼວດ 101

*ມີຄຳຖາມບໍ? ໂທຫາເບີສາຍດ່ວນການສຳຫຼວດສຳມະໂນຄົວຂອງພວກເຮົາໄດ້ທີ່ເບີ 844-2020-API ສຳລັບພາສາອັງກິດ ແລະ ພາສາອື່ນໆ. ສຳລັບຂໍ້ມູນເພີ່ມເຕີມ, ເຂົ້າເບິ່ງເວັບໄຊທ໌ www.CountUsIn2020.org/hotline*

ທຸກໆ 10 ປີ, ລັດຖະບານສະຫະລັດນັບຄົນ *ທຸກໆ ຄົນ*ທີ່ອາໄສຢູ່ໃນສະຫະລັດອາເມລິກາໂດຍຜ່ານການສຳຫຼວດສຳມະໂນຄົວ. ການສຳຫຼວດສຳມະໂນຄົວແມ່ນແບບສອບຖາມສັ້ນໆ ທີ່ຂໍຂໍ້ມູນພື້ນຖານກ່ຽວກັບຄົວເຮືອນຂອງທ່ານແລະຜູ້ທີ່ອາໄສຢູ່ໃນນັ້ນ. ຄຳຕອບສ່ວນຕົວຂອງທ່ານເປັນຄວາມລັບ. ການສຳຫຼວດສຳມະໂນຄົວຈະເລີ່ມຕົ້ນໃນ ເດືອນມັງກອນ2020 ໃນເຂດຫ່າງໄກຊອກຫຼີກຂອງອາລາສກາ ແລະ ຄົວເຮືອນທັງໝົດຈະໄດ້ຮັບການເຊີນເພື່ອໃຫ້ຕອບຂໍ້ມູນຂອງພວກເຮົາໃນ**ເດືອນມີນາ 2020**. ໃຫ້ແນ່ໃຈວ່າທ່ານຖືກນັບນຳ ເພື່ອໃຫ້ໄດ້ຮັບສ່ວນແບ່ງຊັບພະຍາກອນແລະການເປັນຕົວແທນຂອງທ່ານ**ຢ່າງຍຸຕິທຳ**!

## ການຖືກນັບເຂົ້າໃນການສຳຫຼວດສຳມະໂນຄົວຊ່ວຍທ່ານແລະຄອບຄົວຂອງທ່ານ.

- ຂໍ້ມູນຈາກການສຳຫຼວດສຳມະໂນຄົວຈະຖືກນຳໃຊ້ເພື່ອແບ່ງປັນເງິນທຶນຫຼາຍກວ່າ**$800 ພັນຕາໂດລາ** ຂອງລັດຖະບານສຳລັບການບໍລິການທີ່ສຳຄັນເຊັ່ນ: ໂຮງຮຽນ, ຫໍສະໝຸດ, ບັດອາຫານແລະການດູແລສຸຂະພາບ .
- ຂໍ້ມູນຈາກການສຳຫຼວດສຳມະໂນຄົວຍັງຖືກນຳໃຊ້ເພື່ອແບ່ງປັນການເປັນຕົວແທນທາງດ້ານການເມືອງ; ມີປະຊາຊົນຫຼາຍຂື້ນໃນຂົງເຂດຂອງທ່ານເທົ່າໃດກໍ່ມີຜູ້ຕາງຫນ້າຫຼາຍທ່ານທີ່ຈະມີເທົ່ານັ້ນ.

## ຄຳຕອບການສຳຫຼວດສຳມະໂນຄົວຂອງທ່ານເປັນຄວາມລັບ.

ການສຳຫຼວດສຳມະໂນຄົວປີ 2020 ຈະບໍ່ໄດ້ຖາມ ກ່ຽວກັບສະຖານະພາບຂອງພົນລະເມືອງ ຫຼື ການເຂົ້າເມືອງ. ກົມສຳຫຼວດສຳມະໂນຄົວບໍ່ໄດ້ຮັບອະນຸຍາດໃຫ້ແບ່ງປັນຂໍ້ມູນສ່ວນບຸກຄົນຂອງທ່ານກັບອົງກອນອື່ນໆ ຂອງລັດຖະບານ, ພະນັກງານກວດຄົນເຂົ້າເມືອງຫຼືຕໍ່ສາທາລະນະ . ກົດ ໝາຍ ທີ່ເຂັ້ມແຂງປົກປ້ອງການຕອບຮັບຂອງທ່ານຈາກການແບ່ງປັນ! ການສຳຫຼວດສຳມະໂນຄົວຖືກນຳໃຊ້ເພື່ອຈຸດປະສົງທາງສະຖິຕິເທົ່ານັ້ນ.

## ການຕອບການສຳຫຼວດສຳມະໂນຄົວແມ່ນໄວແລະງ່າຍດາຍ.

- **ທ່ານສາມາດຕອບອອນໄລນ໌ກໍ່ໄດ້**. ກົມສຳຫຼວດສຳມະໂນຄົວຈະສົ່ງຄຳແນະນຳໃຫ້ທ່ານໃນ**ກາງເດືອນ-ມີນາ 2020**. ເຂົ້າໄປທີ່ເວບໄຊທ໌ສຳຫຼວດສຳມະໂນຄົວຢ່າງເປັນທາງການ,ໃສ່ຫມາຍເລກປະຈຳຄົວເຮືອນຂອງທ່ານ, ແລະຕອບຄຳຖາມ.

- **ທ່ານສາມາດຕອບຕໍາຖາມທາງໂທລະສັບກໍ່ໄດ້.**
  ໂທຫາສໍານັກສໍາຫຼວດສໍາມະໂນຄົວເພື່ອຕອບຄໍາຖາມສໍາມະໂນຄົວທາງໂທລະສັບ, ແລະຖາມຄໍາຖາມກ່ຽວກັບການ ສໍາຫຼວດສໍາມະໂນຄົວ.
- ຖ້າທ່ານບໍ່ຕອບການສໍາຫຼວດສໍາມະໂນຄົວທາງອອນໄລນ໌ ຫຼືທາງໂທລະສັບ, ກົມສໍາຫຼວດສໍາມະໂນຄົວຈະສົ່ງ**ເຈ້ຍຄໍາຖາມ**ໃຫ້ທ່ານ ທາງໄປສະນີ.

ຖ້າທ່ານບໍ່ຕອບ, ເລີ່ມຕົ້ນໃນເດືອນພຶດສະພາ 2020, ພະນັກງານສໍາຫຼວດສໍາມະໂນຄົວອາດມາທີ່ບ້ານຂອງທ່ານແລະຖາມເອົາຂໍ້ມູນດ້ວຍຕົນເອງ. ທ່ານກໍ່ຍັງສາມາດຕອບທາງອອນໄລນ໌ຫຼືທາງໂທລະສັບໄດ້ຮອດເດືອນມິຖຸນາ 2020.

## ການຊ່ວຍເຫຼືອດ້ານພາສາມີໃຫ້ໃນບາງພາສາ.

ຄໍາຖາມອອນໄລນ໌ແລະການຊ່ວຍເຫຼືອທາງໂທລະສັບມີໃຫ້ໃນພາສາສະເປນ, ພາສາຈີນ, ພາສາຫວຽດນາມ, ພາສາເກົາຫຼີ, ພາສາລັດເຊຍ, ພາສາອາລາບິກ, ພາສາຕາກາລັອກ, ພາສາໂປແລ່ນ, ພາສາຝຣັ່ງ, ພາສາຄຣີຍອລ, ພາສາໂປຕຸເກດ ແລະ ພາສາຍີ່ປຸ່ນ.

ກົມສໍາຫຼວດສໍາມະໂນຄົວກໍາລັງຜະລິດປະມວນຄໍາສັບພາສາ, ບັດລະບຸພາສາ, ແລະຄູ່ມືພາສາໃນ 59 ພາສາທີ່ບໍ່ແມ່ນພາສາອັງກິດ ເຊິ່ງຈະມີໃຫ້ຢູ່ໃນເວັບໄຊທ໌ www.2020census.gov/en/languages.html.

*ທ່ານສາມາດຫາຂໍ້ມູນເພີ່ມເຕີ່ມກ່ຽວກັບການສໍາຫຼວດສໍາມະໂນຄົວໄດ້ທີ່ www.CountUsIn2020.org/resources.*